**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------໐໐໐--------------

<u>ແຂວງຈຳປາສັກ</u>

ເລກທີ 03 /ຈຂ.ຈສ

ປາກເຊ, ວັນທີ 25 / 5 / 2016

# <u>ຄຳສັ່ງແນະນຳ</u>

ເຖິງ: ທ່ານ ເຈົ້າເມືອງ, ທ່ານ ຫົວໜ້າກອງບັນຊາການ ປກສ, ປກຊ, ທ່ານ ຫົວໜ້າພະແນກການ ກົມກອງຕ່າງໆ ທັງພາກລັດ ແລະ ເອກະຊົນ ໃນທົ່ວແຂວງຈຳປາສັກ.

***ເລື່ອງ: ການສຸມທຸກກຳລັງແຮງເພື່ອປະກອບສ່ວນ, ເຂົ້າຮ່ວມ ໃນການປ້ອງກັນ ແລະ ຕອບໂຕ້ ການລະບາດຂອງພະຍາດໄຂ້ຍຸງລາຍຢູ່ແຂວງຈຳປາສັກ.***

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 07/ນຍ, ລົງວັນທີ 4/3/2016, ວ່າດ້ວຍ: ການປ້ອງກັນ ແລະ ສະກັດກັ້ນ ການລະບາດຂອງພະຍາດໄຂ້ຍຸງລາຍ.

ເນື່ອງຈາກວ່າ: ໃນປະຈຸບັນ ພະຍາດໄຂ້ຍຸງລາຍໄດ້ມີການລະບາດຢ່າງຮຸນແຮງຢູ່ແຂວງຈຳປາສັກຂອງພວກເຮົາ ຊຶ່ງໄດ້ຂະຫຍາຍເປັນວົງກວ້າງ ແລະ ເກີດຂຶ້ນຢູ່ໃນບັນດາເມືອງທົ່ວແຂວງ, ພາໃຫ້ມີຄົນເປັນພະຍາດໄຂ້ຍຸງລາຍເປັນຈຳນວນຫລາຍ ເປັນສາຍເຫດເຮັດໃຫ້ປະຊາຊົນຈຳນວນນຶ່ງເສຍຊີວິດ ລວມທັງມີການສູນເສຍທາງດ້ານເສດຖະກິດຂອງບຸກຄົນ ແລະ ສ່ວນລວມເປັນຈຳນວນຫລາຍສົມຄວນ.

ຈາກການປະເມີນທາງດ້ານວິຊາການ ເຫັນໄດ້ວ່າ: ສະພາບການປ່ຽນແປງຂອງດິນຟ້າອາກາດ ເປັນສິ່ງເອື້ອອຳນວຍໃຫ້ແກ່ການຂະຫຍາຍຕົວຂອງພະຍາດໄຂ້ຍຸງລາຍ ແລະ ຄາດວ່າ ພະຍາດດັ່ງກ່າວຍັງຈະສືບຕໍ່ລະບາດສູງຂຶ້ນອີກຕໍ່ໄປ.

ເພື່ອເປັນການປ້ອງກັນ ແລະສະກັດກັ້ນບໍ່ໃຫ້ພະຍາດດັ່ງກ່າວສືບຕໍ່ລະບາດຢູ່ແຂວງຈຳປາສັກຂອງພວກເຮົາ ລວມທັງ ການແກ້ໄຂບັນຫາຢ່າງທັນການ ແລະໄດ້ຮັບຜົນດີ, ບັນດາອົງການຈັດຕັ້ງທັງພາກລັດ, ເອກະຊົນ ແລະທົ່ວສັງຄົມຈະຕ້ອງມີສ່ວນຮ່ວມ, ສະໜັບ-ສະໜູນຂະບວນການຕອບໂຕ້ ຕໍ່ການລະບາດຂອງພະຍາດໄຂ້ຍຸງລາຍຢ່າງແຂງແຮງ ໄປສົມທົບກັບການສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍສາທາລະນະສຸກທົ່ວປວງຊົນໃຫ້ເປັນຮູບປະທຳເພີ່ມຂຶ້ນ.

## ເຈົ້າແຂວງຈຳປາສັກ ອອກຄຳສັ່ງແນະນຳ ດັ່ງນີ້:

1. ໃຫ້ເຈົ້າເມືອງ 10 ເມືອງ ຮີບຮ້ອນເອົາໃຈໃສ່ຕອບໂຕ້ ແລະ ແກ້ໄຂບັນຫາການລະບາດຂອງພະຍາດໄຂ້ຍຸງລາຍທີ່ເກີດຂຶ້ນຢູ່ໃນຂອບເຂດເມືອງຂອງຕົນຢ່າງທັນການ ທັງຮັບປະກັນບໍ່ໃຫ້ມີການລະບາດແຜ່ລາມຫລາຍຂຶ້ນ, ໂດຍການຖືເອົາວຽກງານຕ້ານການລະບາດດັ່ງກ່າວ ເປັນບູລິມະສິດຕົ້ນຕໍໃນການເຄື່ອນໄຫວວຽກງານໃນປະຈຸບັນ, ສ່ວນວຽກງານອື່ນທີ່ເຫັນວ່າ: ຍັງບໍ່ທັນຈຳເປັນເທົ່າທີ່ຄວນກໍ່ໃຫ້ກຳນົດເປັນບູລິມະສິດສຳຮອງເພື່ອຈັດຕັ້ງປະຕິບັດ.

2. ໃຫ້ແຕ່ລະເມືອງຮີບຮ້ອນຈັດຕັ້ງ ແລະ ປັບປຸງຄະນະກຳມະການຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ຂັ້ນເມືອງໃຫ້ສຳເລັດ ໂດຍການເປັນປະທານຂອງທ່ານເຈົ້າເມືອງ ແລະ ຂັ້ນບ້ານໃຫ້ແຕ່ງຕັ້ງນາຍບ້ານເປັນປະທານຄະນະກຳມະການດັ່ງກ່າວ ພ້ອມທັງເອື້ອອຳນວຍຄວາມສະດວກ ແລະ ຊຸກຍູ້ໃຫ້ຄະນະກຳມະການດັ່ງກ່າວມີການເຄື່ອນໄຫວຕາມພາລະບົດບາດ ແລະໜ້າທີ່ຂອງໃຜ-ລາວຢ່າງເປັນຮູບປະທຳ, ແຂງແຮງ ແລະ ເປັນປົກກະຕິ. ມີການປະສານງານຢ່າງແໜ້ນແຟ້ນ ແລະ ຖືເອົາຫ້ອງການສາທາລະນະສຸກເມືອງເປັນເສນາທິການ, ເປັນຈຸດປະສານງານ, ໂດຍມີການກຳນົດແຜນການເຄື່ອນໄຫວ, ບັນດາມາດຕະການ ແລະ ບັນດາວິທີການໃນການຈັດຕັ້ງປະຕິບັດຢ່າງລະອຽດໃນການເຝົ້າລະວັງ, ຕອບໂຕ້ການລະບາດຂອງພະຍາດດັ່ງກ່າວ ໂດຍຖືເອົາການໂຄສະນາໃຫ້ຂໍ້ມູນຂ່າວສານແກ່ສັງຄົມ ແລະ ການທຳລາຍໜອນນ້ຳຍຸງລາຍເປັນວຽກຕົ້ນຕໍ ເຮັດເປັນປະຈຳ ແລ້ວແຈ້ງ ແລະ ລາຍງານດ່ວນໄປຍັງຄະນະກຳມະການຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ຂັ້ນແຂວງ( EOC ພະແນກສາທາລະນະສຸກແຂວງຈຳປາສັກ ).

3. ໃຫ້ແຕ່ລະເມືອງປຸກລະດົມ ແລະ ສຸມທຸກກຳລັງແຮງຂອງສັງຄົມທີ່ມີຢູ່ໃນເມືອງໃຫ້ມີສ່ວນຮ່ວມ ແລະ ມີບົດບາດໃນຂະບວນການຕ້ານພະຍາດລະບາດດັ່ງກ່າວ ພ້ອມທັງຈັດຕັ້ງໃຫ້ມີອາສາສະໝັກບ້ານ, ນັກສຶກສາ, ກຳລັງທະຫານ ແລະ ທຸກພາກສ່ວນເຂົ້າຮ່ວມ, ສ້າງຂະບວນການເພື່ອສຳຫລວດ ແລະ ຕິດຕາມຄວາມໜາແໜ້ນ ຂອງໜອນນ້ຳຍຸງລາຍ ພ້ອມທັງທຳລາຍແຫລ່ງເພາະພັນຍຸງລາຍຢ່າງເປັນປົກກະຕິ, ຮັບປະກັນປຸກລະດົມໃຫ້ປະຊາຊົນມີການປ່ຽນແປງພຶດຕິກຳ ໂດຍການປະຕິບັດ 5 ປ ໃຫ້ກາຍເປັນກິດຈະວັດປົກກະຕິ ໄດ້ແກ່: 1. ປິດຝາພາຊະນະນ້ຳໃຊ້ໃນເຮືອນ ແລະ ນອກເຮືອນ ເພື່ອບໍ່ໃຫ້ຍຸງມາໄຂ່ໃສ່; 2. ປ່ຽນນ້ຳໃນພາຊະນະເຊັ່ນ: ເຕົ້າດອກໄມ້, ນ້ຳຮອງຕີນຕູ້, ຖ້ານຮອງຈອກນ້ຳ; 3. ປ່ອຍປາຫາງນົກຍຸງ ຫລື ລ້ຽງປາຫາງນົກຍຸງຕາມບ້ານເຮືອນ ເພື່ອກິນໜອນນ້ຳຍຸງລາຍ; 4. ປັບປຸງ ໂດຍການອະນາໄມສິ່ງແວດລ້ອມອ້ອມເຮືອນ ບໍ່ໃຫ້ມີກະໂປ໋ະ, ກະປ໋ອງ, ແກ້ວ, ຂວດ, ຢາງຕີນລົດທີ່ມີນ້ຳຂັງ; 5. ປະຕິບັດໃຫ້ເປັນນິໄສ ເປັນປະຈຳທຸກອາທິດ ໂດຍຖືເອົາທຸກໆວັນສຸກເປັນມື້ປະຕິບັດ ແລະ ປະຕິບັດເປັນເອກະພາບກັນໃນທຸກໆບ້ານ ແລະ ທົ່ວແຂວງ, ໃຫ້ດຳເນີນໄປຈົນເຖິງອາທິດທີ 30 ຂອງປີເປັນຢ່າງນ້ອຍ ( ຕາມຕາຕະລາງອາ ທິດລາຍງານດ້ານລະບາດວິທະຍາ ) ເຊິ່ງກົງກັບອາທິດທີ 03 ຂອງເດືອນ ກໍລະກົດ( 7 ) 2016.

ໃນກໍລະນີ ຫາກພົບເຫັນຄອບຄົວທີ່ບໍ່ປະກອບສ່ວນທຳລາຍແຫລ່ງເພາະພັນຍຸງລາຍ ໂດຍປ່ອຍປະໃຫ້ມີນ້ຳຂັງພ້ອມທັງມີໜອນນ້ຳ ຢູ່ຕາມພາຊະນະຕ່າງໆ ແມ່ນໃຫ້ດຳເນີນມາດຕະການປັບໃໝຕາມຄວາມເໝາະສົມ.

4. ບັນດາພະແນກການ, ກົມກອງ, ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທຸກພາກສ່ວນໃນທົ່ວແຂວງຕ້ອງເອົາໃຈໃສ່ປະກອບສ່ວນສົມທົບ ແລະ ສະໜັບ-ສະໜູນເຂົ້າໃນຂະບວນການຕ້ານການລະບາດຂອງພະຍາດໄຂ້ຍຸງລາຍ ລວມທັງການຊີ້ນຳກົມກອງ, ຂະແໜງການສາຍຕັ້ງຂອງຕົນທີ່ຢູ່ທ້ອງຖິ່ນຮາກຖານ ໃຫ້ປະກອບສ່ວນເຂົ້າໃນຂະບວນການດັ່ງກ່າວຢ່າງແຂງແຮງ, ເປັນຕົ້ນແມ່ນ: ການທຳລາຍແຫລ່ງເພາະພັນຂອງຍຸງລາຍຕາມສຳນັກງານ ຫ້ອງການ, ຕາມບ້ານເຮືອນ, ສະຖານທີ່ສາທາລະນະຕ່າງໆ, ການປະສານສົມທົບບັນດາກຳລັງແຮງທີ່ມີຢູ່ ຕະຫລອດຮອດການປຸກລະດົມທົ່ວສັງຄົມໃຫ້ຄວາມຮ່ວມມືກັບການຈັດຕັ້ງ ໃນການປະກອບສ່ວນເຂົ້າໃນຂະບວນການເຄື່ອນໄຫວໂຕ້ຕອບການລະບາດຂອງພະຍາດໄຂ້ຍຸງລາຍ; ໂດຍສະເພາະ ພະແນກສຶກສາທິການ ແລະ ກິລາປະກອບສ່ວນ ໂດຍການນຳໃຊ້ກຳລັງນັກຮຽນເຂົ້າໃນການເຄື່ອນໄຫວຕ້ານການລະບາດ, ນຳເອົາບາງມາດຕະການທີ່ຈຳເປັນສຳລັບຕອບໂຕ້ການລະບາດຂອງພະຍາດໄຂ້ຍຸງລາຍ ກຳນົດເຂົ້າໃນການຮຽນ-ການສອນ; ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບສ່ວນໃນການໂຄສະນາປະຊາສຳພັນຂໍ້ມູນ-ຂ່າວສານຕ່າງໆແກ່ສັງຄົມ; ພະແນກໂຍທາທິການ ແລະ ຂົນສົ່ງ ປະສານງານກັບບໍລິສັດຂົນສົ່ງໂດຍສານ ເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນໃນການເດີນທາງໄປສະຖານບໍລິການດ້ານສາທາລະນະສຸກ ໃນເວລາເຈັບເປັນ; ກອງບັນຊາການ ປກຊ ປະກອບສ່ວນເປັນກຳລັງສະໜັບ-ສະໜູນການເຄື່ອນໄຫວຕ້ານລະບາດຂອງປະຊາຊົນ ແລະ ເຈົ້າໜ້າທີ່ສາທາລະນະສຸກ; ອົງການພຸດທະສາດສະໜາສຳພັນແຕ່ລະຂັ້ນຊ່ວຍຊຸກຍູ້ ແລະ ປຸກລະດົມສັງຄົມໃຫ້ເຂົ້າໃຈຕໍ່

ອັນຕະລາຍຈາກການເປັນພະຍາດໄຂ້ຍຸງລາຍ ແລະ ການທຳລາຍແຫລ່ງເພາະພັນໜອນນ້ຳຍຸງລາຍ ໂດຍປະຕິບັດໄປພ້ອມໆກັບການເທສະໜາໃນເວລາທີ່ມີອອກຕົນຍາດໂຍມມາເຕົ້າໂຮມຢູ່ວັດ; ພະແນກການເງິນແຂວງ ປະກອບສ່ວນກະກຽມ ແລະສະໜັບ-ສະໜູນດ້ານງົບປະມານໃນການຕອບຕ້ານການລະບາດຂອງພະຍາດດັ່ງກ່າວ. ສຳລັບພາກສ່ວນອື່ນໆກໍ່ໃຫ້ປະກອບສ່ວນຕາມພາລະບົດບາດ ແລະໜ້າທີ່ຂອງຕົນເຊັ່ນດຽວກັນ.

5. ໃຫ້ພະແນກສາທາລະນະສຸກແຂວງ, ອົງການປົກຄອງຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການຄວບຄຸມ, ຄຸ້ມຄອງ ການເຄື່ອນໄຫວຂອງແພດທີ່ບໍ່ໄດ້ຮັບອະນຸຍາດຢ່າງເປັນທາງການ ບໍ່ໃຫ້ມີການເຄື່ອນໄຫວປິ່ນປົວຕາມລຳພັງໃຈ, ລວມທັງບັນດາຫ້ອງກວດພະຍາດຂອງເອກະຊົນ ໃນກໍລະນີສົງໃສວ່າ: ຄົນເຈັບນັ້ນເປັນພະຍາດໄຂ້ຍຸງລາຍ ກໍ່ໃຫ້ຮີບຮ້ອນແນະນຳ ແລະ ສົ່ງໄປໂຮງໝໍ ຫລື ສຸກສາລາທີ່ຢູ່ໃກ້ນັ້ນ. ຖ້າຫາກພົບເຫັນການລະເມີດ ຝ່າຝືນ ແມ່ນໃຫ້ດຳເນີນມາດຕະການຢ່າງເຂັ້ມງວດຕາມລະບຽບກົດໝາຍຂອງລັດ.
ຖ້າຫາກຜູ້ກະທຳຜິດແມ່ນ ປະຊາຊົນ ກໍ່ມອບໃຫ້ອົງການປົກຄອງຂັ້ນເມືອງເປັນຜູ້ດຳເນີນມາດຕະການກັບຜູ້ກ່ຽວ;
ຖ້າຫາກເປັນພະນັກງານແພດ ກໍ່ມອບໃຫ້ກົມກອງທີ່ຜູ້ກ່ຽວສັງກັດຢູ່ນັ້ນເປັນຜູ້ດຳເນີນມາດຕະການ.

6. ເພື່ອເປັນການສະຫຼຸບ ແລະ ຖອດຖອນບົດຮຽນ ການປະຕິບັດວຽກງານປ້ອງກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ ໃນແຕ່ລະຂັ້ນຕ້ອງມີການຈັດປະຊຸມດັ່ງນີ້:

- ຂັ້ນແຂວງຈັດກອງປະຊຸມທຸກ 03 ເດືອນ;
- ຂັ້ນເມືອງຈັດກອງປະຊຸມທຸກ 01 ເດືອນ;
- ຂັ້ນບ້ານຈັດກອງປະຊຸມທຸກ ອາທິດ.

ກອງປະຊຸມດັ່ງກ່າວຈະຕ້ອງມີຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງກັນ.
ໃນກໍລະນີມີຄວາມຈຳເປັນກໍ່ຈະຕ້ອງໄດ້ຈັດກອງປະຊຸມຕາມຄວາມເໝາະສົມ.

7. ມອບໃຫ້ພະແນກສາທາລະນະສຸກແຂວງຈຳປາສັກ ນຳເອົາຄຳສັ່ງແນະນຳສະບັບນີ້ໄປຜັນຂະຫຍາຍໃຫ້ເປັນຮູບປະທຳ, ທັງເປັນໃຈກາງໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໃນການຈັດຕັ້ງປະຕິບັດບັນດານະໂຍບາຍ, ບັນດານິຕິກຳຕ່າງໆ, ທັງເປັນເສນາທິການໃຫ້ແກ່ການນຳຂັ້ນແຂວງໃນການກຳນົດທິດທາງ, ການວາງແຜນການຄວບຄຸມ ແລະໂຕ້ຕອບ, ການຂຶ້ນແຜນຄວາມຕ້ອງການດ້ານຕ່າງໆ ຕະຫລອດຮອດການລາຍງານສະພາບການຕ່າງໆຢ່າງເປັນປົກກະຕິໃຫ້ແກ່ຂັ້ນເທິງໃນການປ້ອງກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ.

8. ຫ້ອງວ່າການປົກຄອງແຂວງຊ່ວຍເອື້ອອຳນວຍຄວາມສະດວກໃນການເຄື່ອນໄຫວຄັ້ງດັ່ງກ່າວນີ້, ໃຫ້ການນຳຂັ້ນເມືອງ, ບັນດາພະແນກການ, ກົມກອງ ທັງພາກລັດ ແລະ ເອກະຊົນ ຕະຫຼອດຮອດທົ່ວສັງຄົມໃນຂອບເຂດທົ່ວແຂວງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ ຢ່າງມີປະສິດ ທິພາບ ແລະ ປະສິດທິຜົນສູງ.

9. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**<u>ເຈົ້າແຂວງໆຈຳປາສັກ</u>**

ດຣ ບຸນທອງ ດິວິໄຊ